ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 341 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 25.10.2022

# ດຳລັດ
# ວ່າດ້ວຍ ການສ້າງຕັ້ງ ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3962/ກປ, ລົງວັນທີ 08 ກັນຍາ 2022.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດ ສ້າງຕັ້ງ ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້ ແນໃສ່ຄຸ້ມຄອງ, ປົກປັກຮັກສາປ່າໄມ້, ທີ່ດິນປ່າໄມ້, ສັດນ້ຳ ແລະ ສັດປ່າ ໃຫ້ມີຄວາມອຸດົມສົມບູນ, ເປັນບ່ອນພັກຜ່ອນ ທ່ອງທ່ຽວ ແລະ ສຶກສາຄົ້ນຄວ້າ ທາງດ້ານວິທະຍາສາດ ແນໃສ່ຮັບປະກັນການປົກປັກຮັກສາຊີວະນາໆພັນສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດໃຫ້ເຂັ້ມແຂງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ - ນ້ຳໂມ້**

ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້ ຕັ້ງຢູ່ພາກເໜືອ ກວມເອົາ 1 ແຂວງຄື: ແຂວງຊຽງຂວາງ, ມີ 4 ເມືອງ ຄື: ເມືອງໜອງແຮດ, ເມືອງຄູນ, ເມືອງຄຳ ແລະ ເມືອງໝອກ ຊຶ່ງຢູ່ລະຫວ່າງ ເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ: | 104°2’22’’ |
| | ເສັ້ນຂະໜານ: | 19°42’8’’ |
| ທິດໃຕ້ | ເສັ້ນແວງ: | 103°29’29’’ |
| | ເສັ້ນຂະໜານ: | 19°21’56’’ |
| ທິດຕາເວັນອອກ | ເສັ້ນແວງ: | 104°7’24’’ |
| | ເສັ້ນຂະໜານ: | 19°30’9’’ |
| ທິດຕາເວັນຕົກ | ເສັ້ນແວງ: | 103°50’1’’ |
| | ເສັ້ນຂະໜານ: | 19°8’9’’ |

ຂອບເຂດປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້ ອີງໃສ່ແຜນທີ່ພູມີປະເທດ ມາດຕາສ່ວນ 1: 100.000 ໂດຍຖືເອົາເສັ້ນແວງ ແລະ ເສັ້ນຂະໜານເປັນຫຼັກ ສົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ: ສັນພູ, ຕີນພູ, ສາຍຫ້ວຍ, ສາຍນ້ຳເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເປັນຢ່າງດີ.

ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້ ມີເນື້ອທີ່ທັງໝົດ 180.036 ເຮັກຕາ (ໜຶ່ງແສນແປດສິບພັນສາມສິບຫົກ ເຮັກຕາ).

ທີ່ຕັ້ງ ແລະ ເນື້ອທີ່ ຂອງປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳມັດ ສະແດງໃຫ້ເຫັນ ຢູ່ແຜນທີ່ ມາດຕາສ່ວນ 1: 500.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້ ແມ່ນໜ້າທີ່ ກອງຄຸ້ມຄອງປ່າປ້ອງກັນ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າປ້ອງກັນແຫ່ງຊາດ ແຫຼ່ງນ້ຳຄຽນ-ນ້ຳໂມ້ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນໃນເຂດປ່າປ້ອງກັນ ຫຼື ພື້ນທີ່ໃກ້ຄຽງທີ່ສົ່ງຜົນກະທົບຕໍ່ ປ່າປ້ອງກັນແຫ່ງຊາດ;
5. ກອງທຶນທ່ອງທ່ຽວທຳມະຊາດ;
6. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
7. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ທັນວາ 2022 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ